# ມີໃຫມ່ແລ້ວລືມເກົ່າ

ໂດຍ: ບ່າວຫູ້ກເຈັດ

ໂອ້ສວັນ ຊ່າງກັ່ນແກ້ງ ສໍາແດງຣິດ
ໄດ້ໃກ້ຊິດ ສອງສາມວັນ ພລັນຫ່າງຫາຍ
ຕາສົບຕາ ສົ່ງຍິ້ມກັນ ຫວານຊຶ້ງໃຈ
ແລ້ວຈາກໄປ ໃກຄົນແດນ ແສນລໍາເຄັນ

ເມື່ອຮັບຮູ້ ເຂົາມີໃຫມ່ ໃຈຊຶມເສົ້າ
ໂທ່ ຕົວເຮົາ ເຂົາທໍາລາຍ ຕາຍທັງເປັນ
ສ່ວນຄົນເກົ່າ ເຂົາຄົງຖື ຄືຂອງເຫຼັ້ນ
ໄດ້ແຄ່ເປັນ ເຄື່ອງທົດລອງ ຂອງສັຕຣີ

ສຸດຈະຮັກ ສຸດຈະຫວງ ຫ່ວງຫນັກຫນາ
ແຕ່ໄຮ້ຄ່າ ຊິ້ນຄວາມຫມາຍ ເຂົາຫນ່າຍຫນີ
ເຂົາມີໃຫມ່ ແລ້ວປ່ຽນໄປ ບໍ່ໄຍດີ
ເສົ້າໂສກີ ເຂົາພຽງບອກ ຫຼອກຮັກເຮົາ

ຄວນຄິດໄດ້ ວ່າໃຈຍິງ ບໍ່ທ່ຽງແທ້
ປ່ຽນຜັນແປ ພຽງລົມຊັດ ພັດແພ່ວເບົາ
ທັງທີ່ບອກ ວ່າປັກຫຼັກ ຮັກພຽງເຮົາ
ແຕ່ມີເຂົາ ຢູ່ຂ້າງໃນ ໃຈຂອງນາງ

ຍ່ອມຮູ້ຕົວ ຂອງເຮົາດີ ຊາດນີ້ໂງ່
ຮູ້ສຶກໂຕ ຕອນອົກຫັກ ຮັກຈືດຈາງ
ເຂົາຫາງຸດຫງິດ ຄິດຂຸ່ນເຄືອງ ເຣື່ອງແຍກທາງ

ແລ້ວເມີນຫມາງ ແລ້ວຫາທາງ ລາຈາກຈອນ

ສະສົມຮັກ ປັກຫົວໃຈ ນານຫຼາຍປີ
ເຈົ້າຫນ່າຍຫນີ ຊື້ນເຍື້ອໄຍ ໄຮ້ອາທອນ
ຄິດວ່າຮັກ ປັກຄຶງຫມັ້ນ ນິຣັນດອນ
ເຈົ້າຈາກຈອນ ບໍ່ຫຸ່ນຫຽບ ຢຽບທຳລາຍ

ບໍ່ຢາກຄິດ ວ່າຄົນດີ ມີຫຼາຍຮັກ
ມາປະຈັກ ເມື່ອຄວາມຮັກ ໄຮ້ຄວາມຫມາຍ
ບໍ່ເຄີຍຄິດ ເຂົາເປັນຍິງ ໄຮ້ຫົວໃຈ
ແກ້ງທຳລາຍ ໃຈເມີນຫມາງ ຢ່າງເລືອດເຢັນ

ຈົ່ງສຸຂຂີ ໂຊກດີ ມີຄວາມສຸຂ
ອ້າຍຍອມທຸກ ທົນຣະກຳ ໄປຕາມເວນ
ຂໍໃຫ້ນາງ ຢ່າຫມອງຫມົ່ນ ທົນທຸກເຂັນ
ຂໍຫຼີກເວັ້ນ ເບີກເສັ້ນທາງ ເພື່ອນາງສຸຂສົມ......